# ເຕືອນໃຈລາວ

໑- ຍາດວົງພົງເຜົາ ເຮົານີ້ເອີຍລາວເຮົານີ້ເອີຍ
ເຮັດຄືບໍ່ເຄີຍ ຢູ່ເສີຍເມີຍບໍ່ຢາກລຳຄານ
ການຄິດເຊັ່ນນີ້ ຜິດປະເພນີພົ້ນວິໄສ
ເພາະໄພຣາວີ ທີ່ໄດ້ເກີດມີບໍ່ຫ່າງໄກ
ເຊື້ອລາວຊາວໄພ ເກືອບສູນສິ້ນໄປໄດ້ເສັຽຊື່
ຄວນຫຼືນ້ອງພີ່ ເຮົາຈະຍິນດີໄດ້ຢ່າງໃດ ...

໒- ຍາດວົງພົງເຜົາ ເຮົານີ້ເອີຍລາວເຮົານີ້ເອີຍ
ເຮັດຄືບໍ່ເຄີຍ ຢູ່ເສີຍເມີຍບໍ່ຢາກລຳຄານ
ກໍກກອງໝອງໄໝ້ ເປັນທີ່ເສັຽໃຈໃຫ້ຫວນເຫັນ
ໃຜຮູ້ເຊັ່ນນີ້ ຮີບຕື່ນທັນທີຢ່າມົວຝັນ
ເຊື້ອເຜົ່າເຮົານັ້ນ ຕ້ອງຕຸກເຕືອນກັນທຸກເວລາ
ເຖິງທີປ້ອງກັນ ປະເທດເຮົານັ້ນໃຫ້ໝັ້ນຄົງ ...

໓- ຍາດວົງພົງເຜົາ ເຮົານີ້ເອີຍລາວເຮົານີ້ເອີຍ
ເຮັດຄືບໍ່ເຄີຍ ຢູ່ເສີຍເມີຍບໍ່ຢາກລຳຄານ
ທ່າທີດີເລີດ ອັນຈະປະເສີດສົມໃຈປອງ
ລາວເຮົາພີ່ນ້ອງ ຕ້ອງຮັກແພງກັນນັ້ນແສນດີ
ຊ່ວຍສ້າງຄວາມດີ ເຮົາສິ້ນຊີວີທີວັນວາຍ
ເຖິງຕາຍຮ່ວມທຸກ ເປັນສຸກຍິນດີຕລອດໄປ ...